**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກກະລາດ ປາຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ນາຍົກລັດຖະມົນຕີ ເລກທີ 96 / ນຍ

**ດຳລັດ**

**ວ່າດ້ວຍ ການດຳເນີນທຸລະກິດ ນຳເຂົ້າ, ການສົ່ງອອກ ແລະ ການຈຳໜ່າຍພາຫະນະ ໃນ ສ.ປ.ປ.ລາວ**

- ເພື່ອເຮັດໃຫ້ການ ດຳເນີນທຸລະກິດ ປະເພດດັ່ງກ່າວ ເຂົ້າສູ່ລະບົບ ແລະ ຄວາມເປັນລະບຽບຮຽບຮອ້ຍ ແລະ ຮັບໃຊ້ສັງຄົມໄດ້ດີ ມີຄຸນນະພາບ.

## ນາຍົກລັດຖະມົນຕີ ອອກດຳລັດ:

**ພາກ I**
**ຫລັກການທົ່ວໄປ**

ມາດຕາ 1: ການນຳເຂົ້າ, ການສົ່ງອອກ ແລະ ການຈຳຫນ່າຍພາຫະນະ ປະເພດລົດໃນ ສ.ປ.ປ.ລາວ ຕອ້ງປະຕິບັດ ຕາມກົດເກນການຕອບສະໜອງ ແລະ ຄວາມຕອ້ງການຂອງຕະຫຼາດ, ໂດຍຖືເອົາແຜດານລວມຂອງພາຫະນະທີ່ ລັດຖະບານວາງອອກ ເປັນບ່ອນອີ່ງ.

ມາດຕາ2: ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ. ສົ່ງອອກ ແລະ ຈຳໜ່າຍພາຫະນະລົດຕອ້ງເປັນບໍລິສັດ ທີ່ໄດ້ຮັບສິດເປັນຕົວແທນ ຍີ່ຫໍ້ໃດນຶ່ງ; ລັດຈະສົ່ງເສີມບໍລິສັດທີ່ໄດ້ຮັບສິດເປັນຕົວແທນຍີ່ຫໍ້ໃດນຶ່ງເທົ່ານັ້ນ.

**ພາກ 2**
**ມາດຖານເງື່ອນໄຂຂອງບໍລິສັດທີ່ຈະນຳເຂົ້າ, ສົ່ງອອກ ແລະ ຈຳຫນ່າຍພາຫະນະ**

ມາດຕາ 3: ບໍລິສັດທີ່ຈະນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍພາຫະນະລົດ ຕອ້ງປະກອບດ້ວຍ ມາດຖານເງື່ອນໄຂ ດັ່ງນີ້:

3.1- ເປັນບໍລິສັດທີ່ໄດ້ຮັບການມອບສິດໃຫ້ເປັນຕົວແທນຍີ່ຫໍ້ໃດໜຶ່ງ ຈາກບໍລິສັດແມ່ຊຶ່ງເປັນເຈົ້າຂອງສິນຄ້າຍີ່ຫໍ້ນັ້ນ ໂດຍມີໃບມອບສິດຄັກແນ່ ແລະ ບໍລິສັດດັ່ງກ່າວຈະໄດ້ຮັບສິດໃນການນຳເຂົ້າ, ການສົ່ງອອກ ແລະ ການຈຳໜ່າຍສະເພາະ ພາຫະນະຍີ່ຫໍ້ນັ້ນ.

3.2- ເປັນລໍລິສັດທີ່ໄດ້ຮັບອະນຸນົຍາດໃຫ້ດຳເນີນທຸລະກິດຂາອອກ-ຂາເຂົ້າ ປະເພດພາຫະນະ.

3.3- ດຳເນີນທຸລະກິດນຳເຂົ້າ, ການສົ່ງອອກ ແລະ ການຈຳໜ່າຍສະເພາະ ພາຫະນະເທົ່ານັ້ນ.

3.4- ມີລະບົບສາງ, ມີຮ້ານວາງສະແດງ ແລະ ຈຳຫນ່າຍພາຫະນະທີ່ເໝາະສົມ.

3.5- ມີລະບົບບໍລິການຄົບຊຸດພາຍຫຼັງຂາຍ. ມີພະນັກງານ ແລະ ນາຍຊ່າງບໍລິການປະຈຳ.

## ພາກ3
## ການຈັດຕັ້ງປະຕິບັດ

ມາດຕາ-4: ມອບໃຫ້ກະຊວງການຄ້າ ແລະ ທ່ອງທ່ຽວ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ໂດຍອອກຂໍ້ກຳນົດລະອຽດ, ກວດກາຄືນ ແລະ ເລືອກເຟັ້ນບໍລິສັດທີ່ດຳເນີນທຸລະກິດຂາອອກ-ຂາເຂົ້າ ແລະ ຈຳໜ່າຍພາຫະນະທີ່ມີຢູ່ໃນປະຈຸບັນ ເພື່ອໃຫ້ໄດ້ຕາມມາດຖານເງື່ອນໄຂໃໝ່ນີ້.

ບໍລິສັດ ຫຼື ວິສາຫະກິດທີ່ບໍ່ໄດ້ຕາມມາດຖານເງື່ອນໄຂດັ່ງກ່າວກໍໃຫ້ຢຸດເຊົາການດຳເນີນທຸລະກິດສິນຄ້າປະເພດດັ່ງກ່າວ.

ມາດຕາ-5: ມອບໃຫ້ກະຊວງການຄ້າ ແລະ ທ່ອງທ່ຽວເປັນຜູ້ສັງລວມຄວາມຕ້ອງການ, ຄຸ້ມຄອງ ແລະ ກວດກາ ແລະ ອະນຸຍາດການນຳເຂົ້າ, ການສົ່ງອອກ ແລະ ຈຳໜ່າຍພາຫະນະໃຫ້ຖືກຕ້ອງຕາມທິດທາງຂອງລັດຖະບານ.

ມາດຕາ-6: ກະຊວງຄົມມະນາຄົມ-ຂົນສົ່ງ-ໄປສະນີ ແລະ ກໍ່ສ້າງ ມີຫນ້າທີ່ອະນຸມັດຈຳນວນຄຸນນະພາບ ແລະ ຂະຫນາດຂອງພາຫະນະທີ່ນຳເຂົ້າ ສປປ ລາວ ໃນແຕ່ລະປີ ຕາມລະບຽບຫຼັກການ.

ມາດຕາ-7: ດຳລັດສະບັບນີ້ມີຜົນສັກສິດໃຊ້ໄດ້ສະເພາະການດຳເນີນທຸລະກິດການນຳເຂົ້າ, ການສົ່ງອອກ ແລະ ການຈຳໜ່າຍພາຫະນະປະເພດລົດ.

ທຸກຂໍ້ກຳນົດ, ກົດລະບຽບກ່ຽວກັບການດຳເນີນທຸລະກິດ ພາຫະນະປະເພດລົດ ຊຶ່ງອອກໃນເມື່ອກ່ອນ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ./.

ວຽງຈັນ, ວັນທີ 8/12/1992
ເຊັນ ແລະ ປະທັບຕາ ນາຍົກລັດຖະ
ມົນຕີ : ຄຳໄຕ ສີພັນດອນ.

ສຳເນົາຖືກຕ້ອງຕາມສະບັບເດີມ
ວຽງຈັນ, ວັນທີ 11/12/1992
ຫົວຫນ້າຫ້ອງການ ກ/ຊ ການຄ້າ